ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 103 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 29 / 11 / 18

# ມະຕິ

## ກອງປະຊຸມສະພາແຫ່ງຊາດ
## ວ່າດ້ວຍການຮັບຮອງເອົາການຊີ້ແຈງຂອງລັດຖະບານ ກ່ຽວກັບ ຄຸນນະພາບການບໍລິການການປິ່ນປົວຢູ່ໂຮງໝໍ, ສຸກສາລາ ແລະ ທິດທາງແກ້ໄຂໃນຕໍ່ໜ້າ

- ອີງຕາມລັດຖະທຳມະນູນແຫ່ງສປປລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ສະບັບເລກທີ 10/ສພຊ ລົງວັນທີ 14 ພະຈິກ 2016 ມາດຕາ 60 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີຄັ້ງທີສອງຂອງສະພາແຫ່ງຊາດ;
- ອີງຕາມການຊີ້ແຈງຂອງກະຊວງສາທາລະນະສຸກ ຊຶ່ງສະເໜີໂດຍທ່ານລັດຖະມົນຕີ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ການປະກອບຄຳຄິດຄຳເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງຕໍ່ການຊີ້ແຈງຂອງກະຊວງສາທາລະນະສຸກ ແລະ ການປະກອບຄຳຄິດຄຳເຫັນຂອງກຳມາທິການວັດທະນະທຳ-ສັງຄົມ ກ່ຽວກັບຄຸນນະພາບຂອງການບໍລິການການປິ່ນປົວຢູ່ໂຮງໝໍ, ສຸກສາລາໃນໄລຍະຜ່ານມາ ແລະ ທິດທາງ, ຄາດໝາຍ, ມາດຕະການ ແລະ ວິທີແກ້ໄຂໃນຕໍ່ໜ້າໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາການຊີ້ແຈງຂອງລັດຖະບານ ກ່ຽວກັບຄຸນນະພາບຂອງການບໍລິການການປິ່ນປົວຢູ່ໂຮງໝໍ, ສຸກສາລາ ໃນໄລຍະຜ່ານມາ**

ກອງປະຊຸມເຫັນດີເປັນເອກະພາບຕໍ່ການຊີ້ແຈງຂອງຜູ້ຕາງໜ້າລັດຖະບານ, ຊຶ່ງສະເໜີໂດຍລັດຖະມົນຕີກະຊວງສາທາລະນະສຸກ, ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມພະຍາຍາມຂອງຂະແໜງການທີ່ໄດ້ປະຕິບັດນະໂຍບາຍສາທາລະນະສຸກທົ່ວປວງຊົນ, ຖືເອົາການອະນາໄມກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍ, ເອົາການປິ່ນປົວ ແລະ ສະໜອງການບໍລິການສຸຂະພາບ ຢ່າງທົ່ວເຖິງ, ມີຄຸນນະພາບ, ຍຸຕິທຳ ແລະ ສະເໝີພາບ; ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາທິດທາງ, ແຜນການ, ມະຕິກອງປະຊຸມສະພາແຫ່ງຊາດ ໃນແຕ່ລະໄລຍະ ໄປ



Scanned by CamScanner

ຄຽງຄູ່ກັບການສ້າງ, ປັບປຸງກົດໝາຍ ແລະ ອອກນິຕິກຳໃຕ້ກົດໝາຍຫຼາຍສະບັບ ເພື່ອເປັນເຄື່ອງມືໃນການຄຸ້ມຄອງວຽກງານດັ່ງກ່າວ.

ລະບົບການບໍລິການ ແລະ ການປິ່ນປົວ ໄດ້ຮັບການປັບປຸງ ແລະ ຍົກລະດັບໃຫ້ດີຂຶ້ນກວ່າເກົ່າ ເປັນຕົ້ນ ດ້ານພື້ນຖານໂຄງລ່າງ, ການຢາ, ເຄື່ອງມືອຸປະກອນການແພດ, ບຸກຄະລາກອນ, ການເງິນ, ການບໍລິຫານ ແລະ ການຄຸ້ມຄອງ, ພ້ອມນັ້ນ ຕາໜ່າງສາທາລະນະສຸກໄດ້ຂະຫຍາຍໄປສູ່ເຂດຊົນນະບົດຫ່າງໄກສອກຫຼີກ.

ໄປຄຽງຄູ່ກັນນັ້ນ, ກອງປະຊຸມຍັງສະແດງຄວາມເປັນຫ່ວງຕໍ່ບັນດາສາເຫດຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ໃນການປັບປຸງຍົກລະດັບຄວາມສາມາດ, ຄຸນນະພາບການບໍລິການປິ່ນປົວຢູ່ໂຮງໝໍ, ສຸກສາລາ, ບັນຫາບຸກຄະລາກອນ, ຈັນຍາບັນ ຈັນຍາທຳ ຂອງຜູ້ປະກອບວິຊາຊີບປິ່ນປົວ ທີ່ຂະແໜງການສາທາລະນະສຸກ ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂຢ່າງມີຈຸດສຸມ.

**ມາດຕາ 2 ຮັບຮອງເອົາທິດທາງແກ້ໄຂໃນຕໍ່ໜ້າ**

ຮັບຮອງເອົາທິດທາງແກ້ໄຂໃນຕໍ່ໜ້າຂອງກະຊວງສາທາລະນະສຸກ ເພື່ອປັບປຸງຄຸນນະພາບການບໍລິການການປິ່ນປົວຢູ່ໂຮງໝໍ ແລະ ສຸກສາລາ ປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ລວມທັງບັນດາຄາດໝາຍສູ້ຊົນຮອດປີ 2020 ແລະ ວຽກງານຈຸດສຸມໃນການສືບຕໍ່ປະຕິຮູບສາທາລະນະສຸກທັງ 5 ດ້ານຄື : ດ້ານພະນັກງານ, ດ້ານການຄຸ້ມຄອງບໍລິຫານໂຮງໝໍ, ດ້ານການໃຫ້ບໍລິການສຸຂະພາບ, ດ້ານຂໍ້ມູນ-ຂ່າວສານ ແລະ ດ້ານການເງິນສາທາລະນະສຸກ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດເພື່ອປັບປຸງຄຸນນະພາບການບໍລິການການປິ່ນປົວຢູ່ໂຮງໝໍ, ສຸກສາລາຂອງຂະແໜງການສາທາລະນະສຸກ**

ເພື່ອຮັບປະກັນຜົນສຳເລັດໃນການຈັດຕັ້ງປະຕິບັດທິດທາງແກ້ໄຂໃນຕໍ່ໜ້າ, ກອງປະຊຸມສະພາແຫ່ງຊາດ ສະເໜີມາດຕະການເພີ່ມຕື່ມ ດັ່ງນີ້:

1. ເພີ່ມທະວີການຊີ້ນຳ-ນຳພາ ຕໍ່ການຍົກສູງຄຸນນະພາບການບໍລິການການປິ່ນປົວຢູ່ໂຮງໝໍ ແລະ ສຸກສາລາ ລວມທັງພາກເອກະຊົນ, ສືບຕໍ່ແກ້ໄຂບັນດາຂໍ້ຄົງຄ້າງຢ່າງມີຈຸດສຸມ ແລະ ໃຫ້ເປັນຮູບປະທຳດີຂຶ້ນກວ່າເກົ່າ;

2. ເພີ່ມທະວີການເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນຈັນຍາທຳ, ຂອງຜູ້ປະກອບວິຊາຊີບປິ່ນປົວ ໃຫ້ມີຄວາມບໍລິສຸດ ສັດຊື່ ຕໍ່ອາຊີບ, ມີຄວາມຮັບຜິດຊອບ, ມີນ້ຳໃຈເສຍສະຫຼະ, ມີມະນຸດສຳພັນທີ່ດີ ແລະ ມີຄວາມຍຸຕິທຳໃນການປະຕິບັດໜ້າທີ່ຂອງຕົນ;

3. ສືບຕໍ່ຄົ້ນຄວ້າສ້າງ, ປັບປຸງກົດໝາຍ, ຜັນຂະຫຍາຍບັນດາມາດຕາຂອງກົດໝາຍວ່າດ້ວຍການປິ່ນປົວ ແລະ ອອກນິຕິກຳໃຕ້ກົດໝາຍໃຫ້ເປັນລະບົບຄົບຊຸດ ເຊັ່ນ ການສ້າງຄູ່ມືກ່ຽວກັບມາດຕະຖານຄຸນນະພາບການປິ່ນປົວ;

4. ການວາງແຜນສ້າງ, ຍົກລະດັບ, ສັບຊ້ອນບຸກຄະລາກອນ ຕ້ອງໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງ ເພື່ອສະໜອງໃຫ້ໂຮງໝໍເມືອງ ແລະ ສຸກສາລາ ໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ ໂດຍສະເພາະແຂວງ, ເມືອງ, ບ້ານທີ່ຍັງທຸກຍາກຢູ່ເຂດຫ່າງໄກສອກຫຼີກ;

5. ສົ່ງເສີມການນຳໃຊ້ການປິ່ນປົວການແພດທັນສະໄໝສົມທົບການແພດພື້ນເມືອງ, ຢາພື້ນເມືອງທີ່ມີຄຸນນະພາບເຂົ້າໃນການບໍລິການປິ່ນປົວ, ຊຸກຍູ້ສົ່ງເສີມການຄົ້ນຄວ້ານຳໃຊ້ຊັບພະຍາກອນທຳມະຊາດທີ່ເປັນຢາເຂົ້າເຖິງແຫຼ່ງທຶນເພື່ອດຳເນີນການຜະລິດ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງນຳໃຊ້ໃຫ້ມີຄວາມຍືນຍົງ;

6. ສະເໜີໃຫ້ຈັດສັນງົບປະມານໃຫ້ໂຮງໝໍ ແລະ ສຸກສາລາ ເພື່ອຮັບປະກັນໃຫ້ມີເງິນບໍລິຫານ, ທຶນໝູນວຽນຢາ ແລະ ອຸປະກອນການແພດພື້ນຖານທີ່ຈຳເປັນ ແລະ ຄົ້ນຄວ້າວາງແຜນໄລຍະສັ້ນ, ໄລຍະຍາວ ໃນການລົງທຶນໃສ່ການກໍ່ສ້າງ ສ້ອມແປງໂຮງໝໍ, ສຸກສາລາ ທີ່ບໍ່ໄດ້ມາດຕະຖານ;

7. ເພີ່ມທະວີການຄຸ້ມຄອງວຽກງານປິ່ນປົວ, ມີລະບົບຕິດຕາມກວດກາ ແລະ ປະເມີນຜົນຢ່າງເປັນປົກກະຕິຕໍ່ຄຸນນະພາບ ຂອງສະຖານທີ່ປິ່ນປົວ ແລະ ຜູ້ປະກອບວິຊາຊີບປິ່ນປົວ ທັງ ພາກລັດ, ເອກກະຊົນ ພ້ອມທັງຈັດ



Scanned by CamScanner

ຕັ້ງປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນວຽກງານການປິ່ນປົວ ແລະ ມີມາດຕະການຕໍ່ຜູ້ລະເມີດກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະບານ ຊີ້ນຳກະຊວງສາທາລະນະສຸກ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປານີ ຢາທໍ່ຕູ້**



Scanned by CamScanner